ການຢັ້ງຢືນການສົ່ງອອກດ້ວຍຕົນເອງຊ່ວຍໃຫ້ຜູ້ສົ່ງອອກດ້ວຍຕົນເອງສາມາດແຈ້ງແຫຼ່ງກຳເນີດຂອງສິນຄ້າສົ່ງອອກ ໂດຍອີງຕາມເອກະສານທາງການຄ້າທີ່ກ່ຽວຂ້ອງໄດ້ທຸກເວລາ ເຮັດໃຫ້ການສົ່ງອອກສິນຄ້າມີຄວາມງ່າຍດາຍ ພ້ອມທັງຫຼຸດຜ່ອນໜ້າວຽກ, ຄວາມຫຍຸ້ງຍາກໃນການບໍລິຫານ ແລະ ຄ່າໃຊ້ຈ່າຍ.



ພິມຄັ້ງທີ 01 ປີ 2020

ພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ
ກົມການນຳເຂົ້າ ແລະ ສົ່ງອອກ
ກະຊວງອຸດສາຫະກຳ ແລະ ການຄ້າ
ເວັບໄຊ www.laotradeportal.gov.la
ໂທ: +856 21 450 255

ສະໜັບສະໜູນໂດຍ:

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

Implemented by giz



# ການຢັ້ງຢືນແຫຼ່ງກຳເນີດສິນຄ້າ ດ້ວຍຕົນເອງຂອງອາຊຽນ (ASEAN Wide Self Certification: AWSC)




## ຢັ້ງຢືນແຫຼ່ງກຳເນີດສິນຄ້າ ດ້ວຍຕົວຂອງທ່ານເອງໄດ້ ທຸກເວລາ

## ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງອາຊຽນ

ລະບົບການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງອາຊຽນ ແມ່ນແນວຄິດລິເລີ່ມການອຳນວຍຄວາມສະດວກທາງດ້ານການຄ້າ ຊຶ່ງອະນຸຍາດໃຫ້ຜູ້ສົ່ງອອກ ໄດ້ສະແດງໃຫ້ເຫັນເຖິງຄວາມສາມາດຂອງຕົນເອງໃນການປະຕິບັດໃຫ້ສອດຄ່ອງກັບລະບຽບແຫຼ່ງກຳເນີດສິນຄ້າຂອງສັນຍາການຄ້າດ້ານສິນຄ້າຂອງອາຊຽນໃນນາມເປັນ "ຜູ້ສົ່ງອອກດ້ວຍຕົນເອງ" ເພື່ອຢັ້ງຢືນສະຖານະແຫຼ່ງກຳເນີດສິນຄ້າດ້ວຍຕົນເອງສຳລັບສິນຄ້າທີ່ສາມາດໄດ້ຮັບສິດທິພິເສດທາງດ້ານອັດຕາພາສີພາຍໃຕ້ສັນຍາສັນຍາການຄ້າດ້ານສິນຄ້າຂອງອາຊຽນ.

## ການຂຶ້ນທະບຽນຂອງຜູ້ສົ່ງອອກດ້ວຍຕົນເອງ

ກວດເງື່ອນໄຂຂອງບໍລິສັດ → ພົວພັນແລະລົງທະບຽນກັບຫ້ອງການເຈົ້າໜ້າທີ່ → ປະຕິບັດຕາມເງື່ອນໄຂຂອງຜູ້ສົ່ງອອກດ້ວຍຕົນເອງ

### ຫ້ອງການເຈົ້າໜ້າທີ່ອອກອະນຸຍາດ

| ປະເທດ ສະມາຊິກ | ຫ້ອງການ ເຈົ້າໜ້າທີ່ອອກອະນຸຍາດ | ປະເທດ ສະມາຊິກ | ຫ້ອງການ ເຈົ້າໜ້າທີ່ອອກອະນຸຍາດ |
|---|---|---|---|
| ບຣູໄນ | ກະຊວງການເງິນ ແລະ ເສດຖະກິດ: ພະແນກອຳນວຍຄວາມສະດວກ ແລະ ສົ່ງເສີມການຄ້າ | ມຽນມາ | ກະຊວງການຄ້າ |
| ກຳປູເຈຍ | ຄະນະກຳມະການຊີ້ນຳ | ຟີລິບປິນ | ກົມໃຫຍ່ພາສີ |
| ອິນໂດເນເຊຍ | ກົມການຄ້າຕ່າງປະເທດ, ກະຊວງການຄ້າ | ສິງກະໂປ | ກົມພາສີ |
| ສປປ ລາວ | ກົມການນຳເຂົ້າ ແລະ ສົ່ງອອກ ກະຊວງອຸດສາຫະກຳ ແລະ ການຄ້າ | ໄທ | ກົມການຄ້າຕ່າງປະເທດ |
| ມາເລເຊຍ | ກະຊວງການຄ້າສາກົນ ແລະ ອຸດສາຫະກຳ | ຫວຽດນາມ | ກະຊວງອຸດສາຫະກຳ ແລະ ການຄ້າ |

## ຜົນປະໂຫຍດຂອງການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງອາຊຽນ

- ແຈ້ງອອກເອງໄດ້ທຸກເວລາ
- ສາມາດຢັ້ງຢືນແຫຼ່ງກຳເນີດດ້ວຍຕົນເອງ
- ເຮັດໃຫ້ຂັ້ນຕອນການສົ່ງອອກງ່າຍຂຶ້ນ
- ຫຼຸດໜ້າວຽກ, ຄວາມຫຍຸ້ງຍາກໃນການບໍລິຫານ ແລະ ຄ່າໃຊ້ຈ່າຍ

ເງື່ອນໄຂພື້ນຖານໃນການເປັນຜູ້ສົ່ງອອກດ້ວຍຕົນເອງ ແມ່ນອີງຕາມສັນຍາການຄ້າດ້ານສິນຄ້າຂອງອາຊຽນ ພາຍໃຕ້ລະບຽບການຈັດຕັ້ງປະຕິບັດ. ເງື່ອນໄຂອື່ນໆ ອາດເປັນໄປຕາມການກຳນົດຂອງປະເທດສະມາຊິກອື່ນໆ ດັ່ງລຸ່ມນີ້:

1. ຂຶ້ນທະບຽນໃນປະເທດສົ່ງອອກ;
2. ຮູ້ ແລະ ເຂົ້າໃຈລະບຽບແຫຼ່ງກຳເນີດສິນຄ້າ ຂອງສັນຍາການຄ້າດ້ານສິນຄ້າອາຊຽນ;
3. ເປັນຜູ້ສົ່ງອອກທີ່ມີປະສົບການ;
4. ບໍ່ມີປະຫວັດສໍ້ໂກງແຫຼ່ງກຳເນີດສິນຄ້າ;
5. ປະຕິບັດລະບຽບທີ່ກຳນົດໄວ້ໃນລະບຽບການບໍລິຫານຄວາມສ່ຽງ;
6. ຜູ້ປະກອບການຕ້ອງມີ ການແຈ້ງເປັນຜູ້ສົ່ງອອກດ້ວຍຕົນເອງ ແລະ ມີຄວາມພ້ອມ ສຳລັບການສະໜອງຂໍ້ມູນ ໃຫ້ແກ່ການກວດຄືນ ແລະ ການຢັ້ງຢືນ; ແລະ
7. ມີລະບົບການເກັບຮັກສາ ແລະ ບັນທຶກເອກະສານທີ່ດີ.

## ຂໍ້ມູນທີ່ຕ້ອງສະໜອງໃນໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ

### 1. ລາຍລະອຽດຜູ້ສົ່ງອອກດ້ວຍຕົນເອງ

- ລະຫັດຂອງຜູ້ສົ່ງອອກດ້ວຍຕົນເອງທີ່ໄດ້ຮັບການມອບສິດ

### 2. ລາຍລະອຽດຂອງສິນຄ້າ

- ຊື່ສິນຄ້າ;
- ລະຫັດ HS Code ຫຼື ລາຍລະອຽດເພີ່ມເຕີມຂອງລະຫັດ AHTN;
- ເງື່ອນໄຂການໄດ້ແຫຼ່ງກຳເນີດສິນຄ້າ;
- ປະເທດແຫຼ່ງກຳເນີດສິນຄ້າ;
- ລາຄາ FOB ເມື່ອນຳໃຊ້ກົດການສະສົມມູນຄ່າໃນພາກພື້ນ;
- ຈຳນວນຂອງສິນຄ້າ;
- ເຄື່ອງໝາຍການຄ້າ; ແລະ
- ການແຈ້ງແຫຼ່ງກຳເນີດສິນຄ້າແບບອອກຕໍ່ເນື່ອງ, ເລກທີຂອງໃບແຈ້ງແຫຼ່ງກຳເນີດສິນຄ້າ, ວັນທີຢັ້ງຢືນ, ປະເທດແຫຼ່ງກຳເນີດຂອງປະເທດສົ່ງອອກທຳອິດ, ຖ້າຈຳເປັນ, ລະຫັດຜູ້ສົ່ງອອກດ້ວຍຕົນເອງທີ່ໄດ້ຮັບການມອບສິດຂອງຜູ້ສົ່ງອອກຈາກປະເທດສົ່ງອອກທຳອິດ.

### 3. ການຢັ້ງຢືນໂດຍຫ້ອງການເຈົ້າໜ້າທີ່ອອກອະນຸຍາດ

- ການຢັ້ງຢືນໂດຍຫ້ອງການເຈົ້າໜ້າທີ່ອອກອະນຸຍາດຜູ້ສົ່ງອອກດ້ວຍຕົນເອງ ຊຶ່ງສິນຄ້າໄດ້ຖືກກຳນົດໃນໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າສອດຄ່ອງຕາມລະບຽບທັງໝົດທີ່ກ່ຽວຂ້ອງ.
- ລາຍເຊັນ ແລະ ກາປະທັບທີ່ຖືກອະນຸຍາດຂອງຫ້ອງການເຈົ້າໜ້າທີ່ອອກ ອານຸຍາດ.

**ພາຍຫຼັງການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງຊຽນ, Form D ຫຼື e – Form D ກໍ່ຍັງສາມາດນຳໃຊ້ໄດ້ປົກກະຕິ.**